ອຸທິນ ບຸນຍາວົງ

# ປາສໍ່ໂລພາ

ຂຽນເລື່ອງໂດຍ: ອຸທິນ ບຸນຍາວົງ

ແຕ້ມຮູບປະກອບໂດຍ: ສ. ສະໄຫວ

ຈັດພິມໂດຍ ກົມສາມັນສຶກສາ ກະຊວງສຶກສາແລະກິລາ.

ອຸປະຖຳໂດຍ

ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວທີ່ໂຕກຽວ

1990



ຄັ້ງໜຶ່ງ ບໍ່ທັນດົນທັນນານຫຍັງດອກ, ແມ່ປາຄໍ່ໂຕໜຶ່ງສັ່ງສອນລູກໆວ່າ:

" ດຽວນີ້ ລູກທັງຫຼາຍກໍ່ແຂງແຮງ ລອຍນ້ຳກໍ່ເກັ່ງ ຫາກິນກໍ່ພໍກຸ້ມປາກກຸ້ມທ້ອງຂອງຕົນແລ້ວ, ນັບແຕ່ມື້ນີ້ຕໍ່ໄປ ພວກລູກຕ່າງກໍ່ຊິໄດ້ພັດພາກຈາກກັນໄປທຸກທິດ ທຸກທາງ ເພື່ອຫາລ້ຽງຊີບຂອງໃຜມັນ.

ແມ່ເອງກໍ່ເບິ່ງແຍງພວກລູກບໍ່ຫຼອນ , ສະນັ້ນໃຫ້
ພວກລູກລະມັດລະວັງ, ຢ່າກິນແບບບໍ່ເລືອກ ຈັກໜ່ອຍ
ຖືກເບັດເຂົາ; ຢ່າໂລບມາກໂລພາ, ຢ່າເຂົ້າໄປໃນສະ
ລ້ຽງປາຂອງຄົນ ເຖິງແມ່ນວ່າຈະມີເຫຍື່ອກິນ ຢ່າງອຸ
ດົມສົມບູນ ແຕ່ອັນຕະລາຍມີຮອບດ້ານ, ໃຫ້ພວກ
ລູກຈື່ຈຳເອົາໄວ້ ".





ເມື່ອສົ່ງສອນລູກແລ້ວ, ແມ່ປາຄໍ່ກໍ່ພາລູກເລາະລ່ອງ
ໄປຕາມໜອງ, ຕາມບຶງ, ໄປຕາມທົ່ງນາ ຊຶ່ງອັ່ງນອງໄປ
ດ້ວຍນ້ຳ ຍາມຕົ້ນລະດູຝົນ.

ປາຄໍ່ນ້ອຍ ຕື່ນເຕັ້ນດີໃຈ, ພວກມັນລອຍເຈີດໄປ
ທາງຊ້າຍ ແລ້ວກໍ່ເຈີດໄປທາງຂວາ ແລະ ສວາບກິນ
ເຫຍື່ອຢ່າງສະໜຸກສະໜານ.

ພວກມັນ ມົວນຳຫາເຫຍື່ອໄປໄກໆ, ຫຼາຍເທື່ອ ຫຼາຍທີກໍ່ເລີຍຫຼົງທາງກັບເມືອຫາແມ່ບໍ່ພົບແລ້ວກໍ່ຫາຍ ສາບສູນໄປມື້ລະ ສອງສາມໂຕ.

ວັນເວລາຜ່ານໄປ, ປາຄໍ່ນ້ອຍທີ່ລອຍ ຕິດຕາມແມ່ນັ້ນ ກໍ່ເຫຼືອບໍ່ຮອດສິບໂຕ ແລະ ອີກບໍ່ຫຼາຍມື້ຕໍ່ມາ ກໍ່ບໍ່ເຫຼືອຈັກໂຕຊ້ຳ.





ແຕ່ລະໂຕທ່ຽວຫາກິນໄປຕາມລຳພັງໃຜມັນ , ໂຕໜຶ່ງລອຍຢູ່ຕາມຫ້ວຍຮ່ອງ , ໂຕໜຶ່ງຢູ່ໜອງ, ໂຕໜຶ່ງຢູ່ບຶງ, ໂຕໜຶ່ງຢູ່ຕາມທ້ອງທົ່ງນາ ແລະ ອື່ນ ໆລໆ...

ໃນຈຳນວນ ພວກທີ່ຫຼົງແມ່ແຕ່ຕອນຕົ້ນໆນັ້ນ ມີປາຄໍ່ນ້ອຍໂຕໜຶ່ງຊຶ່ງມີເກັດດຳ , ອັນເປັນທີ່ແປກຕ່າງກວ່າໝູ່ ເພາະອ້າຍນ້ອງທັງໝົດມີເກັດໜິ່ນ .

ມື້ນັ້ນ ປາຄໍ່ເກັດດຳ ມີວກິນໜອນນ້ຳ ຢູ່ອ້ອມກໍເຂົ້າ, ມັນເຈືອກຊ້າຍເຈືອກຂວາ ໄລ່ນຳໜອນນ້ຳຊຶ່ງລອຍເປັນຍິ່ວໆ. ໜອນນ້ຳບາງໂຕຫຼີກໄປໄກໆ ແຕ່ທ້າວເກັດດຳກໍ່ໄລ່ນຳທັນ ແລະ ສວາບກິນເອົາຢ່າງແຊບນົວ. ການໄລ່ນຳເຫຍື່ອໄປໄກໆ ເຮັດໃຫ້ທ້າວເກັດດຳຫຼົງທາງ ແລະ ນັບແຕ່ນັ້ນມາ, ທ້າວເກັດດຳ ກໍ່ຫາກິນໄປຕາມລຳພັງໂດດດ່ຽວ, ລອຍລ່ອງໄປຕາມກະແສນ້ຳ, ຈາກບຶງນ້ອຍລອຍສູ່ບຶງໃຫຍ່, ຈາກວັງໜຶ່ງໄປສູ່ອີກວັງໜຶ່ງ.





ຫຼາຍວັນຫຼາຍເດືອນເຂົ້າ ທ້າວເກັດດຳ ກໍ່ໃຫຍ່ກ້າ ໜ້າບານ ຕົນໂຕທໍ່ດ້າມພ້າ, ປານ້ອຍອື່ນໆຕ່າງກໍ່ເກງ ກົວແລະຫຼີກໜີໄປໄກໆ ເພາະຢ້ານຕົກເປັນເຫຍື່ອຂອງ ທ້າວເກັດດຳ.

ທ້າວເກັດດຳ ມັກກິນຫຼາຍ ກິນບໍ່ອີ່ມເປັນ ສວາບ ກັບໆຕະຫຼອດມື້. ຢູ່ນ້ຳວັງນີ້ແລ້ວກໍ່ໂອ້ອ່າວຫານ້ຳວັງ ໜ້າ, ໂດຍຄິດວ່ານ້ຳວັງໜ້າຈະສົດ ໃສໄຫຼເຢັນກ່ວາ ມີເຫຍື່ອກິນຫຼາຍກ່ວາ .

ຄືນໜຶ່ງ, ທ້າວເກັດດຳພົບນ້ຳ ໄຫຼອອກມາຈາກສະ ທີ່ຢູ່ແຄມບຶງ. ມັນເຊື່ອວ່ານັ້ນແມ່ນສະລ້ຽງປາ ຊຶ່ງແນ່ ນອນຈະຕ້ອງມີປານິນປາໄນ, ທ້າວເກັດດຳມັກກິນປາ ນິນນ້ອຍ ແລະປາໄນນ້ອຍ ເພາະໄລ່ສວາບໄດ້ງ່າຍ.

ມັນຄິດວ່າ ຖ້າເຂົ້າໄປຢູ່ໃນສະແຫ່ງນັ້ນ ກໍ່ເທົ່າກັບ ເປັນເຈົ້າຊີວິດ ສະໜຸກຢູ່ສະໜຸກກິນ, ມີແຕ່ຜູ້ຢຳເກງ. ສ່ວນຢູ່ບຶງນັ້ນ ມັນຕ້ອງເປັນຮອງປາຄໍ່ໂຕອື່ນໆ ທັງນ້ຳ ກໍ່ເໝັນກຸຍ .

24 / VII





" ຊິໄປຢ້ານອັນຕະລາຍອັນໃດ, ກູເຂົ້າໄປຢູ່ໃນສະ ຫັ້ນກໍ່ສໍາກັບເປັນສິງຢູ່ໃນປ່າອາຟຣິກກາ ມີແຕ່ຜູ້ຢ້ານ ຊໍ້າຕ່ວາ ຕີລັງກາກິນກໍ່ຍັງໄດ້ " ທ້າວເກັດດໍາເວົ້າກັບ ໂຕເອງຢ່າງຈອງຫອງ: ແລ້ວກໍ່ຕັດສິນໃຈ ເຕັ້ນອອກ ຈາກບຶງ ລີເລືອກະເສືອກກະສິນຂຶ້ນຄູ ທີ່ເຈົ້າຂອງສະ ນ້ຳນອ້ອມໄວ້. ມັນກິ້ງຕີກລີງຄືນຫຼາຍເທື່ອ ແຕ່ກໍ່ບໍ່ຍອມ ງ່າຍໆ ດີງບິກບິນຕໍ່ໄປ. ໃນທີ່ສຸດ, ມັນກໍ່ໝົ້ນເຂົ້າສະ ຈົນໄດ້.

ມັນພົບວ່າ ເປັນສະລ້ຽງປາ ຊຶ່ງມີປານິນຢ່າງຄັບຄັ່ງ ອັ່ງອໍ, ປາໄນກໍມີ ແຕ່ບໍ່ຫຼາຍ.ນອກນັ້ນກໍມີ ປາຊິວ, ປາໝັດ, ກຸ້ງ ແລະ ສັດນ້ຳອື່ນໆ.

ທ້າວເກັດດຳຫຼູບໃສ່ປານິນນ້ອຍ ແລະ ສວາບກິນຢ່າງສະບາຍ ເພາະແຕ່ໃດມາ ປານິນໃນສະແຫ່ງນີ້ບໍ່ເຄີຍຖືກປາຊະນິດອື່ນມາລົບກວນ ຫຼື ໄລ່ສວາບກິນຈັກເທື່ອ. ພວກມັນບໍ່ລະມັດລະວັງ ຈຶ່ງຕົກເປັນເຫຍື່ອຢ່າງງ່າຍດາຍ.





ຫຼາຍເທື່ອຫຼາຍທີເຂົ້າ ປານິນໃນສະ ກໍ່ພາກັນແຕກຕື່ນ ແລະ ຫຼີກໜີໄປໄກໆ, ແຕ່ເຖິງຈະ ຫຼີກໜີໄປໄກສໍ່າໃດກໍ່ຕາມ ປານິນໂຕຂະໜາດນິ້ວ ກ້ອຍລົງມາກໍ່ຖືກໄລ່ນຳທັນ ແລະ ຕົກເປັນເຫຍື່ອໂຕແລ້ວໂຕຕໍ່. ເບື່ອກິນປານິນແລ້ວ ກໍຫັນມາກິນກຸ້ງ, ເບື່ອກິນກຸ້ງ ກໍ່ຫັນມາກິນປາຊິວ ແລະ ອື່ນໆ. ບໍ່ດົນບໍ່ນານ ທ້າວເກັດດຳກໍ່ຕຸ້ຍດີພີມັນ ແລະ ໃຫຍ່ຂຶ້ນໂຕທໍ່ແຂນ .

ປາຢູ່ໃນສະຫັງໜົດຕ່າງກໍ່ເກງກົວ ແລະ ຕ້ອງລະມັດລະວັງໂຕຢູ່ສະເໝີ, ຫ້າວເກັດດຳລອຍໄປທາງໃດ ປາອື່ນໆ ຕ້ອງຫຼີກໜີໄປໄກໆ.

ເມື່ອກິນປານ້ອຍ ບໍ່ເຕັມທ້ອງເຕັມໄສ້ງ່າຍ, ມັນກໍ່ຫັນມາກິນປານິນ ປາໃນ ໂຕຂະໜາດສອງນິ້ວ ຫຼື ສາມນິ້ວ, ແຕ່ກໍ່ຍາກແທ່ ເພາະປາໂຕຂະໜາດນີ້ຫຼີບຫຼີກເກ່ງແລະໄວ. ມີຫຼາຍໆເທື່ອ ເກັດດຳໄລ່ນຳບໍ່ທັນ, ແລ້ວກໍ່ເລີຍຫັນມາສວາບກິນປານ້ອຍໆ ທີ່ໄປບໍ່ວ່ອງບໍ່ໄວ.





ຄວາມຈິງການທີ່ທ້າວເກັດດຳ ຈະກິນແຕ່ປານ້ອຍໆ ອັນມີຫຼາຍຊະນິດຢູ່ໃນສະນັ້ນ ກໍ່ນັບວ່າເຫຼືອອີ່ມ, ມັນຊ້ຳພັດມັກໂລບມາກໂລພາ, ກິນປານ້ອຍແລ້ວກໍ່ຍັງຢາກກິນປາໃຫຍ່ກວ່ານັ້ນຕື່ມອີກ ຈຶ່ງໄລ່ລວາບໂຕນັ້ນໂຕນີ້ ຕາມຊອບໃຈ.

ວັນໜຶ່ງ ຫຼັງຈາກກິນເຫຍື່ອອີ່ມສົມຄວນແລ້ວ, ທ້າວເກັດດຳກໍ່ລອຍລ່ອງອ້ອມສະ ແລະ ໄປພໍ້ປານິນໂຕໜຶ່ງ ຂະໜາດທໍ່ສາມນິ້ວ ທີ່ລອຍຊ້າໆ ວິນໄປ ວຽນມາ ຢູ່ບ່ອນເກົ່າ.

ທ້າວເກັດດຳລອຍເຂົ້າໄປໃກ້ໆ ; ແຕ່ປານິນໂຕນີ້ ກໍ່ບໍ່ຫຼີບຫຼີກໄປທາງໃດ, ທ້າວເກັດດຳໄດ້ທ່າກໍ່ຫຼຸບເຂົ້າໃສ່ແລ້ວສວາບລຶດລົງທ້ອງ. ມັນຈະລອຍຕໍ່ໄປ, ແຕ່ໄປໄດ້ພຽງໜ້ອຍດຽວກໍ່ຮູ້ສຶກຜຶດຕຶ໊ງ ສັງເກດມີເສັ້ນສາຍອັນໃດອັນໜຶ່ງ ຄາຢູ່ປາກ.





ຄວາມຈິງປາບຶນເຄາະຮ້າຍໂຕນີ້, ຖືກເບັດຢູ່ກ່ອນແລ້ວ. ທ້າວເກັດຄຳລອຍຕໍ່ໄປບໍ່ໄດ້, ມັນດີ້ນເຈືອກໃຕ້ເຈືອກເໜືອ ພີ່ດໄປພີ່ດມາສຸດຂີດ ແຕ່ກໍ່ບໍ່ຫຼຸດ, ດີ້ນຈົນເມື່ອຍ ເສັ້ນສາຍນັ້ນກໍ່ຍັງຄາປາກຢູ່. ໃນທີ່ສຸດ ມັນກໍ່ອ່ອນແຮງ ແລ້ວກໍ່ລອຍວົນໄປ ວຽນມາຢູ່ບ່ອນເກົ່າ , ອາການຂອງມັນ ເປັນຄືປາບຶນ ໂຕທີ່ມັນໄດ້ສວາບກິນນັ້ນ(໑) .

ຕອນແລງ ມີຄົນມາຍົກຄັນເບັດຂຶ້ນແລ້ວກໍ່ເວົ້າອອກມາສຽງດັງໆວ່າ: " ໂຫ້! ໄດ້ປາຄໍ່ໃຫຍ່ " ສ່ວນຄັນເບັດໂກ່ງເກືອບຫັກ .





ປາຄໍ່ທີ່ເປັນອ້າຍນ້ອງຂອງທ້າວເກັດດຳ ຍັງພາກັນ
ລ່ອງລອຍ ຫາກິນຢູ່ຕາມໜອງ, ຕາມບຶງ ແລະ ຫ້ວຍຮ່ອງ
ຄອງເໝືອງຕໍ່ໄປ.

ວັນໜຶ່ງ ຂ້າງໜ້າ, ພວກມັນອາດຈະໄດ້ພົບກັນອີກ.
ແຕ່ທີ່ແນ່ນອນກໍ່ຄື ພວກມັນຈະບໍ່ໄດ້ ພົບພໍ້ກັບທ້າວ
ເກັດດຳອີກເລີຍ .